# ໂຮງຮຽນວັນອາທິດ

## ວັນອາທິດ ທີ 28 ກໍຣະກະດາ 2019 (07-28-2019 )

# ຂຶ້ນຢູ່ກັບພຣະເຈົ້າ

ແມ່ນຫຍັງທີ່ເປັນສິ່ງທີ່ບໍ່ໜ້າເຊື່ອທີ່ມີຢູ່ໃນຕົວທ່ານເອງ?.

**ຈຸດສຳຄັນຂອງບົດຮຽນນີ້**: ພຣະເຈົ້າຍິ່ງໃຫຍ່ກວ່າທຸກໆສິ່ງທີ່ທ້າທາຍເຮົາ ທີ່ພວກເຮົາປະເຊີນ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ເປັນສິ່ງດີທີ່ສຸດທີ່ມີເຄື່ອງມືເມື່ອເຮົາຕ້ອງການ ສິ່ງເຫຼົ່ານີ້ທ່ານສາມາດເຊື່ອໄດ້ວ່າເຮັດວຽກໄດ້ສຳເຣັດຕລອດ. ແຕ່ແມ່ນຫຍັງ ຖ້າວ່າ "ວຽກງານ" ເປັນພຽງແຕ່ເຮັດໃຫ້ພໍໃຈທ່ານກາງຊີວິດ? ແມ່ນຫຍັງທີ່ສາມາດໃຫ້ທ່ານໄວ້ໃຈເມື່ອທ່ານປະເຊີນໜ້າກັບການທ້າທາຍໃນການຕັດສິນໃຈ ຫຼືທຸກໆສິ່ງທີ່ເບິ່ງເໝືອນວ່າຈະຕໍ່ສູ້ທ່ານ?

- ບາງຄົນໄວ້ໃຈໃນດວງຊາຕາຫຼືໜັງສືກ່ຽວກັບໂຊກລາບທີ່ແນະນຳເຂົາເຈົ້າ ໃນການເປັນລູກຄ້າໜັງສືພິມລາຍວັນເພື່ອຄວາມພະຍາຍາມດີ້ນລົນຕໍ່ສູ້ກັບຊີວິດ.
- ບາງຄົນໄວ້ໃຈໃນເຫຼົ້າຫຼືຢາບາງຊະນິດເພື່ອຮັບມືກັບສິ່ງທີ່ທ້າທາຍຫຼືການແຂ່ງຂັນ.
- ບາງຄົນມີແຕ່ເບິ່ງໃນກະຈົກແລະກໍເວົ້າວ່າ " ຂ້າພະເຈົ້າບໍ່ສາມາດເຮັດສິ່ງນີ້ໄດ້ດ້ວຍຕົວເອງ."
- ບາງຄົນປ່ອຍໃຫ້ຄວາມບັງເອີນເກີດຂຶ້ນເປັນການຕັດສິນໃຈຂອງພວກເຂົາ. ພວກເຂົາສ່ຽງໂຊກດ້ວຍການໂຍນຫລຽນດ້ວຍການບໍ່ສົນໃຈຕໍ່ຄຳທີ່ຂຽນໃນຫລຽນນັ້ນວ່າ: "ພວກເຮົາເຊື່ອໃນພຣະເຈົ້າ."

ແທນທີ່, ກະສັດອາຊາຈະໃຫ້ແບບຢ່າງທີ່ຖືກຕ້ອງກັບພວກເຮົາເພື່ອຕິດຕາມ. ຮູ້ແລະເຂົ້າໃຈນັ້ນໝາຍຄວາມວ່າເຊື່ອວາງໃຈໃນພຣະເຈົ້າຢ່າງເຕັມທີ່ແລະຫັນກັບມາຫາພຣະເຈົ້າ ກ່ອນສິ່ງອື່ນໃດເມື່ອປະເຊີນໜ້າສິ່ງທີ່ບໍ່ໜ້າເຊື່ອທີ່ມີອຳນາດມາຈາກສິ່ງທີ່ທ້າທາຍ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, ແລະ 2 )

### ສຶກສາພຣະຄັມພີ

### 1. <u>2 ຂ່າວຄາວ 14: 9-11</u>

*9 ເຊຣາຊາວເອທີໂອເປັຍໄດ້ອອກມາຕໍ່ສູ້ກັບພວກເຂົາດ້ວຍກອງທັບໜຶ່ງລ້ານຄົນ ແລະຣົດຮົບສາມຮ້ອຍຄັນມາຮອດ*
*ເມືອງມາເຣຊາ 10 ແລະອາຊາຊົງຍົກອອກໄປປະທະກັບພວກເຂົາ ແລະພວກເຂົາທັງຫລາຍກໍຕັ້ງແນວຮົບໃນພູເຂົາເຊ*
*ຟາທາທີ່ມາເຣຊາ 11 ອາຊາຮ້ອງທູນຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງພະອົງວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ ບໍ່ມີຜູ້ໃດຊ່ວຍ*
*ໄດ້ຢ່າງພຣະອົງ ໃນການສູ້ຮົບກັນລະຫວ່າງຜູ້ທີ່ມີກຳລັງກັບຜູ້ທີ່ບໍ່ມີກຳລັງ ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້າ*
*ພຣະອົງທັງຫລາຍ ຂໍຊົງຊ່ວຍພວກຂ້າພຣະອົງ ເພາະຂ້າພຣະອົງທັງຫລາຍເພິ່ງພຣະອົງ ຂ້າພຣະອົງມາຕໍ່ສູ້ກັບຄົນໝູ່*
*ໃຫຍ່ ນີ້ໃນພຣະນາມຂອງພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງທັງຫລາຍ ຂໍຢ່າ*
*ໃຫ້ມະນຸດຊະນະພຣະອົງ"*

ກະສັດອາຊາແລະຊົນຊາດຢູດາໄດ້ຮັບການຝຶກຝົນເວລາມີຄວາມສງົບ ແລະປະຊາຊົນໄດ້ຮັບຄວາມສຳເຣັດດີຫຼາຍ, ແຕ່ພະຍຸຂອງການປ່ຽນແປງກຳລັງມາ. ບໍ່ມີໃຜປາຖນາເຂົ້າໃນສົງຄາມ ແຕ່ການຕໍ່ສູ້ນີ້ໂດຍສະເພາະການຕໍ່ສູ້ຄັ້ງນີ້ເບິ່ງເໝືອນວ່າອາຊາແລະກອງທັບຂອງລາວຕ້ອງການທີ່ຈະຫຼີກລ້ຽງ. ອາດເປັນການງ່າຍເກີນໄປສຳລັບພວກເຂົາທີ່ຈະຢູ່ພາຍໃນບ້ານເມືອງທີ່ເສີມສ້າງຄວາມແຂງແກ່ນສິດໆຮ້ອນໆ, ແຕ່ນັ້ນບໍ່ແມ່ນຊັຍຊະນະຂອງການຕໍ່ສູ້ເທົ່າໃດ. ອາຊາບໍ່ໄດ້ຫັນຫຼັງໜີຈາກກຳລັງຄວາມແຂງແກ່ນທີ່ຢູ່ຕໍ່ໜ້າຂອງລາວ. ລາວແລະກອງທັບຂອງລາວລວມກັນແລ້ວຈຳນວນ 580,000 ຄົນ ( 2 ຂ່າວຄາວ 14:8) ທີ່ຕຽມຕົວເຂົ້າຊູ່ການຕໍ່ສູ້. ພວກເຮົາຮູ້ນ້ອຍນຶ່ງກ່ຽວກັບຄູ່ຕໍ່ສູ້ຂອງລາວ, “ ເຊຣາ ຄົນກູເຊ." ກູເຊໂດຍປົກກະຕິແລ້ວໄດ້ບົ່ງຊື່ວ່າເອທິໂອເປັຍ, ແລະກອງທັບຂອງເຊຣາອາດມີຄວາມເຂັ້ມແຂງເປັນທະຫານຮັບຈ້າງຕໍ່ສູ້ໃນນາມຂອງອີຢີບ. ກັບ “ ກອງທັບນຶ່ງລ້ານຄົນແລະລົດຮົບສາມຮ້ອຍຄັນ,”(ຂໍ້ 9) ພວກເຮົາສາມາດຄາດເດົາແບບງ່າຍໆວ່າເຊຣາ ແລະທະຫານຂອງລາວຈະບໍ່ມີຄວາມກັງວົນຍ້ານກົວທີ່ຈະຕໍ່ສູ້ກັບກອງທັບທີ່ມີຈຳນວນພົນພຽງເຄິ່ງນຶ່ງຂອງພວກເຂົາ.

ຜູ້ທີ່ເຝົ້າຄອຍເບິ່ງໂອກາດທີ່ຈະເປັນໄປໄດ້ທີ່ຮູ້ວ່າອາຊາຈິງຈັງກັບຈຳນວນຫຼາຍກວ່າແລະອາດຈະເປັນໄປໄດ້ທີ່ຈະປະເຊີນກັບຄວາມພ່າຍແພ້. ແຕ່ອາຊາບໍ່ໄດ້ປ່ອຍໃຫ້ຈຳນວນຂອງກອງທັບທີ່ມີຈຳນວນຫຼາຍຂັດຂວາງລາວຈາກການໃຊ້ຄວາມພະຍາຍາມໃກ້ມາເຖິງ. ລາວເດີນໄປຂ້າງໜ້າໃນດິນແດນທີ່ບໍ່ຄຸ້ນເຄີຍປະເຊີນກັບກອງທັບທີ່ມີຈຳນວນຫຼາຍກວ່າສອງເທົ່າຂອງກອງທັບຂອງລາວ ໄດ້ຢ່າງໃດ? ອາຊາມີພຣະເຈົ້າຢູ່ຄຽງຂ້າງລາວ. ອາຊາໄດ້ຮຽນຮູ້ຫຼາຍຢ່າງຈາກການຕິດຕາມເບິ່ງບິດາຂອງລາວເອົາຊະນະການຕໍ່ສູ້ກັບເຢໂຣໂບອາມ, ກະສັດແຫ່ງອານາຈັກພາກເໜືອ. ອາບີຢາ ບິດາຂອງອາຊາ ໄດ້ປະເຊີນກັບກອງທັບອິສຣາເອນເມື່ອກອງທັບມີຈຳນວນສອງເທົ່າຂອງກອງທັບຢູດາ ( 13:3).

ອາຊາໄດ້ຮຽນຈາກບິດາຂອງລາວວ່າພຣະເຈົ້າສາມາດຊ່ວຍໄດ້ບໍ່ວ່າສິ່ງທີ່ທ້າທາຍນັ້ນຈະນ້ອຍຫຼືໃຫ່ຍ. ອາຊາໄດ້ຮູ້ຜົນຂອງການຕໍ່ສູ້ຂອງເຂົາບໍ່ແມ່ນການຕັດສິນໃຈຂອງມະນຸດພຽງຜູ້ດຽວ. ດັ່ງນັ້ນລາວຮ້ອງຫາພຣະເຈົ້າດ້ວຍຄຳອະທິຖານ ລາວອະທິຖານຂໍພຣະເຈົ້າເພື່ອໃຫ້ລາວເປັນບຸກຄົນຊຶ່ງລາວເປັນແລະການໃຊ້ປໂຍດໃນການຊ່ວຍເຫຼືອຂອງລາວສອດຄ່ອງກັບທັງສອງບໍ່ວ່າໃນຕຳແໜ່ງຂອງຣິດອຳນາດແລະບຸກຄົນທີ່ບໍ່ມີຄວາມເຂັ້ມແຂງໃນຕົວເອງ. ເພາະວ່າອາຊາຮູ້ວ່າບໍ່ມີສິ່ງໃດທີ່ເປັນໄປບໍ່ໄດ້ສຳລັບພຣະເຈົ້າ, ລາວຂໍຮ້ອງພຣະເຈົ້າໃຫ້ຊ່ວຍລາວໂດຍສະເພາະການຈັດຫາຄວາມແຂງແຮງແລະຄວາມເຂັ້ມແຂງທີ່ລາວຕ້ອງການ.

“ພຣະຜູ້ເປັນເຈົ້າພຣະອົງເປັນພຣະເຈົ້າຂອງຂ້ານ້ອຍ.” ອາຊາປະກາດຄວາມຈົງຮັກພັກດີຂອງລາວຕໍ່ພຣະເຈົ້າດັ່ງທີ່ບິດາຂອງລາວໄດ້ເຮັດ. ໃນຄຳປະກາດນີ້, ລາວຍອມອຸທິດຕົວລາວເອງແລະກອງທັບຂອງລາວຕໍ່ພຣະເຈົ້າ. ລາວປະກາດວ່າການຕໍ່ສູ້ແລະຜົນຂອງມັນເປັນຂອງອົງພຣະຜູ້ເປັນເຈົ້າ, ຜູ້ໃດທີ່ຕໍ່ສູ້ພຣະອົງຜູ້ນັ້ນຈະບໍ່ຢັ້ງຢືນ. ພວກເຮົາບໍ່ໄດ້ເຂົ້າໃນການຕໍ່ສູ້ເໝືອນຢ່າງອາຊາໄດ້ປະເຊີນ, ແຕ່ພວກເຮົາປະເຊີນກັບການພະຍາຍາມຕໍ່ສູ້ທີ່ທ້າທາຍໃນແຕ່ລະວັນຂອງການດຳລົງຊີວິດ. ຈຳນວນຂອງສິ່ງທ້າທາຍເຫຼົ່ານີ້ທີ່ເຮົາປະເຊີນນັ້ນແປກຢູວ່າບໍ່ແມ່ນສິ່ງທີ່ເຮົາມັກ. ຫຼາຍໆການຕໍ່ສູ້ແລະທ້າທາຍເຫຼົ່ານີ້ເບິ່ງເໝືອນເປັນສິ່ງທີ່ເປັນໄປບໍ່ໄດ້ສຳລັບພວກເຮົາທີ່ຈະເອົາຊະນະ. ຫຼາຍໆຄົນຂອງພວກເຮົາຂ້ອນຂ້າງຈະຢູ່ເສີຍໆຄືບໍ່ມີຫຍັງເກີດຂຶ້ນກັບຕົນແລະແກ້ງເຮັດເໝືອນວ່າບໍ່ມີເຫດການໃດໆເກີດຂຶ້ນຢູ່ທີ່ນັ້ນເລີຍ.

ໃນໂອກາດສຳຄັນເຫຼົ່ານັ້ນ, ພວກເຮົາຕ້ອງເອົາອາຊາເປັນຕົວຢ່າງແລະຮ້ອງຮຽກຫາພຣະເຈົ້າຜູ້ທີ່ພິເສດໃນຄວາມເປັນໄປບໍ່ໄດ້. ພຣະເຈົ້າຢູ່ທີ່ນັ້ນເພື່ອຊ່ວຍເຮົາ, ດັ່ງຕອນທີ່ພຣະອົງຢູ່ທີ່ນັ້ນໃຫ້ຄວາມຊ່ວຍເຫຼືອກັບອາຊາ. ບໍ່ໄດ້ເປັນບັນຫາສຳລັບພຣະເຈົ້າວ່າການຕໍ່ສູ້ຈະໃຫ່ຍຂນາດໃດ. ຄວາມປາຖນາຂອງພຣະອົງແມ່ນຕ້ອງການໃຫ້ເຮົາຮ້ອງຮຽກເອີ້ນຫາພຣະອົງຜູ້ມີອຳນາດເຕັມໃນການໃຫ້ການຊ່ວຍເຫຼືອ.

ຂັ້ນແລກໃນການດີ້ນລົນຕໍ່ສູ້ຈະມາຈາກຄວາມເຂົ້າໃຈວ່າການສູ້ຮົບມີຢູ່ກ່ອນພວກເຮົາແລະຍອມຮັບວ່າພວກເຮົາບໍ່ສາມາດເຮັດໄດ້ດ້ວຍຕົວເອງ. ເມື່ອໄດ້ເປັນເທື່ອສຸດທ້າຍທີ່ທ່ານຮ້ອງໄຫ້ຕໍ່ພຣະເຈົ້າກ່ຽວກັບບັນຫາທີ່ຮ້າຍແຮງຫຼືສະຖານະການທີ່ທ້າທາຍທີ່ທ່ານປະເຊີນຢູ່? ໃຊ້ເວລາຢູ່ກັບພຣະເຈົ້າເປັນການສ່ວນຕົວ, ແລະໃນໂອກາດສຳຄັນຂອງ

ຄວາມງຽບສງົບນີ້, ຮ້ອງໄຫ້ຕໍ່ພຣະອົງ, ເວົ້າລົມກັບພຣະອົງ. ບອກກັບພຣະອົງກ່ຽວກັບບັນຫາການຕໍ່ສູ້ຂອງທ່ານ, ສິ່ງທີ່ທ້າທາຍຂອງທ່ານ, ແລະການຕໍ້ສູ້ທີ່ຄຸກຄາມທຳລາຍທ່ານ. ໄວ້ວາງໃຈພຣະອົງໃຫ້ຊ່ວຍທ່ານເໝືອນກັບຊ່ວຍອາຊາ.

**2. 2 ຂ່າວຄາວ 14:12-15**

*12 ພຣະຜູ້ເປັນເຈົ້າຈຶ່ງຊົງໃຫ້ຊາວເອທີໂອເປັຽຜ່າຍແພ້ຕໍ່ອາຊາແລະຕໍ່ຢູດາ ແລະຊາວເອທີໂອເປັຽກໍຫນີໄປ 13 ອາຊາແລະພົນທີ່ຢູ່ກັບພຣະອົງກໍໄລ່ຕາມເຂົາໄປເຖິງເມືອງເກຣາຣ໌ ແລະຊາວເອທີໂອເປັຽລົ້ມຕາຍຫລາຍຈົນບໍ່ເຫລືອແມ່ນແຕ່ຊີວິດດຽວ ເພາະເຂົາໄດ້ແຕກຜ່າຍຕໍ່ພຣະພັກພຣະຜູ້ເປັນເຈົ້າແລະກອງທັບຂອງພຣະອົງ ຄົນຢູດາໄດ້ເກັບຂອງທີ່ຍຶດໄດ້ຢ່າງຫລວງຫລາຍ 14 ເຂົາກໍໂຈມຕີບັນດາຫົວເມືອງຮອບເມືອງເກຣາຣ໌ ເພາະວ່າຄວາມຢ້ານກົວພຣະຜູ້ເປັນເຈົ້ານັ້ນມາຄອບເຂົາທັງຫລາຍ ເຂົາໄດ້ປຸ້ນຫົວເມືອງທັງສິ້ນ ເພາະມີຂອງທີ່ຍຶດໄດ້ໃນນັ້ນຫລາຍ 15 ເຂົາໄດ້ໂຈມຕີເຕັນຂອງຜູ້ທີ່ມີງົວ ແລະເອົາແກະໄປຫລວງຫລາຍແລະອູດດ້ວຍ ແລ້ວເຂົາກໍກັບໄປຍັງເຢຣູຊາເລັມ*

ອາຊາແລະກອງທັບຂອງລາວອອກເດີນທາງປົກປ້ອງໃຫ້ກຳລັງໃຈບ້ານເມືອງຂອງພວກເຂົາທີ່ປະເຊີນໜ້າກັບກອງທັບທີ່ມີຈຳນວນຫຼາຍເຖິງສອງເທົ່າກອງທັບຂອງພວກເຂົາ. ພວກເຂົາປະກາດຄວາມຮັບຜິດຊອບຂອງເຂົາຕໍ່ພຣະເຈົ້າແລະຮ້ອງຫາພຣະອົງເພື່ອຄວາມຊ່ວຍເຫຼືອ. ພວກເຂົາຮູ້ວ່າພວກເຂົາບໍ່ຄວນສູ້ຮົບກັບການຕໍ່ສູ້ນີ້ດ້ວຍກຳລັງແຂງແກ່ນຂອງຕົວເອງ ແຕ່ຂຶ້ນກັບພຣະເຈົ້າ. ພຣະເຈົ້າເຮັດຫຍັງໃນຄຳຕອບ? ແທນທີ່ຈະປົກປ້ອງກີດກັນການຕໍ່ສູ້, ພຣະເຈົ້ານຳເອົາກອງທັບຝ່າຍກົງກັນຂ້າມມາປະຊິດອາຊາແລະກອງທັບຂອງລາວ.

ດ້ວຍເຫດໃດພຣະເຈົ້າບໍ່ເຮັດໃຫ້ອາຊາແລະກອງທັບຂອງລາວພຽງແຕ່ຫຼີກລ້ຽງຈາກການປະທະກັນ? ພຣະເຈົ້າບໍ່ຕ້ອງການໃຫ້ລາວຊະນະການຕໍ່ສູ້ແບບງ່າຍໆ ໂດຍປາສະຈາກການກ້າວເດີນອອກໄປປະເຊີນໜ້າກັບສັດຕຣູ? ແນ່ນອນພຣະເຈົ້າຈະເຮັດຢ່າງນັ້ນກໍໄດ້, ແຕ່ພຣະອົງເລືອກທີ່ຈະກຳໜົດໃຫ້ລາວໃນການວາງຕົວເພື່ອລາວຈະໄດ້ສະແດງຄວາມເຊື່ອຂອງລາວ. ໂດຍການກ້າວອອກໄປປະເຊີນໜ້າຕໍ່ສູ່ກັບຊາວເອທີໂອເປັຍ, ອາຊາແລະນັກຮົບໃນສນາມຮົບໄດ້ໃຫ້ຄວາມໄວ້ວາງໃຈໃນພຣະເຈົ້າ. ລາວເຊື່ອວາງໃຈໃນພຣະເຈົ້າທີ່ເໜືອກວ່າຄຳສັນຍາ; ລາວໄດ້ພິສູດຄວາມໄວ້ວ່າງໃຈນັ້ນໃນສນາມຮົບ. ຄວາມເຊື່ອໄວ້ວ່າງໃຈນັ້ນແມ່ນໃນການຕໍ່ສູ້ກັບກອງທັບທີ່ໃຫຍ່ກວ່າເປັນສອງເທົ່າ. ແຕ່ພຣະເຈົ້າຢູ່ກັບລາວ, ແລະພຣະອົງຕ້ອງການໃຫ້ລາວເຊື່ອໝັ້ນໃຈໃນພຣະອົງເທົ່ານັ້ນ. ຂະນະທີ່ລາວປະເຊີນໜ້າກັບສິ່ງທີ່ຍິ່ງໃຫຍ່ນີ້ເກີນກວ່າການທ້າທາຍຊີວິດ.

ລາວໄດ້ເຊື່ອໄວ້ວາງໃຈໃນພຣະເຈົ້າ, ແຕ່ລາວຍັງມີຄວາມຕ້ອງການຄວາມສນຸກສຸກສະບາຍໃນຊີວິດຂອງລາວ. ລາວຈະຕ້ອງໄປຕໍ່ສູ້ດ້ວຍຄຳສັ່ງເພື່ອນຳເອົາຊັຍຊະນະ. ຂັ້ນຕອນນີ້ຂອງຄວາມໄວ້ວາງໃຈແລະການເຊື່ອຟັງເປັນພື້ນຖານທີ່ໄດ້ເຫັນຄວາມຮູ້ສຶກພ່າຍແພ້ຂອງສັດຕຣູ. ຊັຍຊະນະນີ້ບໍ່ພຽງເໜືອກວ່າສັດຕຣູທີ່ຢູ່ຕໍ່ໜ້າລາວ; ລາວຍັງໂຈມຕີກັບພວກທີ່ສົມຮູ້ຮ່ວມຄິດທັງໝົດກັບສັດຕຣູໃນ "ຮອບເມືອງເກຣາ" ແລະເຂົ້າໃຈ "ການຈັດການກັບສິ່ງຂອງທີ່ໄດ້ມາ." ອາຊາແລະກອງທັບຂອງລາວບໍ່ພຽງແຕ່ຊະນະການຕໍ່ສູ້ທີ່ລາວປະເຊີນ, ແຕ່ລາວໄດ້ຮັບລາງວັນຈາກການຕໍ່ສູ້ກັບການຊົ່ວຮ້າຍນຳ. ເມື່ອອາຊາແລະກອງທັບຂອງລາວກ້າວເຂົ້າໄປໃນການຕໍ່ສູ້, ລາວໄວ້ວາງໃຈພຣະເຈົ້າທັງໆທີ່ລາວບໍ່ຮູ້ວ່າລາວຈະຊະນະຫຼືບໍ່.

ກອງທັບຢູດາທີ່ຢູ່ພາຍໃຕ້ການບັງຄັບບັນຊາຂອງອາຊາອາດຈະມີຄວາມຄິດບາງຢ່າງທີ່ແຕກຕ່າງທີ່ອົງພຣະຜູ້ເປັນເຈົ້າວາງແຜນໄວ້ ແຕ່ບໍ່ແມ່ນພຣະເຈົ້າກະທຳຢ່າງນັ້ນເລື້ອຍໆ? ພວກເຮົາໄວ້ວາງໃຈໃນຊັຍຊະນະຂອງພຣະອົງສຳລັບການເອົາຊະນະຈາກການທ້າທາຍແລະການຕໍ່ສູ້ຂອງພວກເຮົາ, ແຕ່ພວກເຮົາຄາດການລ່ວງໜ້າໄປກ່ອນວ່າພຣະອົງຈະຕິດຕາມແຜນການພວກເຮົາທີ່ຈັດຕຽມໄວ້. ເຖິງແມ່ນວ່າ, ຊັຍຊະນະຂອງພຣະເຈົ້າເກີດຂຶ້ນສເມີໂດຍທີ່ບໍ່ໄດ້ຄາດ

ຄິດ. ເມື່ອເຮົາມອບການຕໍ່ສູ້ຂອງເຮົາໃຫ້ກັບພຣະເຈົ້າ, ການທ້າທາຍ, ແລະສະຖານະການທີ່ເປັນໄປບໍ່ໄດ້, ພຣະອົງຈະໃຫ້ໄຊຍະຊະນະກັບເຮົາທີ່ຍອມຮັບຕໍ່ແຜນການຂອງພຣະອົງ.

ພຽງແຕ່ຫຼັງຈາກພຣະເຈົ້າໃຫ້ໄດ້ຮັບໄຊຍະຊະນະຢ່າງເຊັດສິ້ນພວກເຂົາໄດ້ຮັບອະນຸຍາດໃຫ້ກັບເຢຣູຊາເລັມແລະປົກປ້ອງບ້ານເມືອງຂອງພວກເຂົາໄວ້ຢ່າງປອດພັຍ. ເມື່ອພວກເຮົາປະເຊີນກັບສິ່ງທີ່ທ້າທາຍແລະສະຖານະການທີ່ເປັນໄປບໍ່ໄດ້, ພຣະເຈົ້າຕ້ອງການໃຫ້ເຮົາມຸ້ງໜ້າເຂົ້າຕໍ່ສູ້ກັບບັນຫານັ້ນ. ເປັນທາງດຽວ ເມື່ອເຮົາປະເຊີນກັບການທ້າທາຍແລະການຕໍ່ສູ້ຂອງພວກເຮົາຈຶ່ງສາມາດເຫັນການອັສຈັນແລະຄວາມຍິ່ງໃຫຍ່ຂອງພຣະເຈົ້າ. ເມື່ອພຣະອົງໃຫ້ເຮົາໄດ້ໄຊຍະຊະນະ, ຕໍ່ຈາກນັ້ນແລະພຽງແຕ່ສິ່ງນັ້ນທີ່ພວກເຮົາສາມາດກັບມາບ້ານເພື່ອແບ່ງປັນໄຊຊະນະທີ່ພຣະເຈົ້າຊົງຊ່ອຍ. ຂະນະທີ່ພຣະເຈົ້າໃຫ້ໄຊຍະຊະນະ, ພຣະອົງຍັງຄາດຫວັງວ່າທ່ານຈະກ້າວໄປຂ້າໜ້າຕໍ່ສູ້ໂດຍມີພຣະອົງຢູ່ຄຽງຂ້າງທ່ານ. ຂຶ້ນກັບພລັງຄວາມເຂັ້ມແຂງແລະຣິດອຳນາດຂອງພຣະເຈົ້າເມື່ອທ່ານປະເຊີນໜ້າແຕ່ລະການທ້າທາຍ. ແລະເມື່ອພຣະເຈົ້ານຳເອົາໄຊຍະຊະນະມາໃຫ້, ຈົ່ງເລົ່າໃຫ້ຄົນອື່ນຮູ້ກ່ຽວກັບເຣື່ອງນີ້. ບອກເຖິງໄຊຍະຊະນະຂອງທ່ານ. ດ້ວຍຄຳເວົ້າແລະແບບຢ່າງຂອງທ່ານ, ຈົ່ງເປັນທີ່ໜູນໃຈຄົນອື່ນຂະນະເມື່ອເຂົາເຈົ້າປະເຊີນກັບການທ້າທາຍແລະການຕໍ່ສູ້.

## ນຳໃຊ້ໃນຊີວິດ

ທ່ານຈະເຊື່ອໃນໃຈວ່າພຣະເຈົ້າຍິ່ງໃຫຍ່ກວ່າທຸກໆ ການທ້າທາຍທີ່ທ່ານປະເຊີນຢູ່ຢ່າງໃດ? ເບິ່ງວິທີການນຳໃຊ້ຕາມຂ້າງລຸ່ມນີ້.

- **ແບ່ງປັນ.** ເວົ້າຕໍ່ຄົນໃນກຸ່ມຂອງທ່ານກ່ຽວກັບການທ້າທາຍທີ່ທ່ານກຳລັງປະເຊີນຢູ່ນັ້ນ, ຈາກທັສນະຄະຕິຂອງທ່ານ, ເປັນການທ້າທາຍທີ່ເປັນໄປບໍ່ໄດ້. ຂໍຮ້ອງໃຫ້ເຂົາເຈົ້າອະທິຖານຮ່ວມກັບທ່ານເພື່ອສະຖານະການນັ້ນ.

- **ເຊື້ອເຊີນ.** ຂໍຮ້ອງຜູ້ໃດຜູ້ນຶ່ງເດີນຄຽງຂ້າງທ່ານກັບບັນຫາຄວາມຍຸ້ງຍາກທີ່ທ່ານປະເຊີນຢູ່. ເຊື້ອເຊີນບຸກຄົນຜູ້ນີ້ " ແຈ້ງໃຫ້" ທ່ານຮູ້ເປັນປະຈຳແລະໜູນໃຈໃຫ້ສືບຕໍ່ໄວ້ວາງໃຈໃນພຣະເຈົ້າ.

- **ສະຖານທີ່ງຽບສງົບ.** ໃຊ້ເວລາອຸທິດຕົນໃນການອະທິຖານໃນທີ່ສງົບງຽບ, ຫຼີກເວັ້ນຈາກສິ່ງທີ່ເຮັດໃຫ້ໄຂວ່ເຂ. ປະໂຫຍດສັບໄວ້ໃນຣິດຂອງທ່ານ. ໃຊ້ເວລາຈັກສອງສາມຊົ່ວໂມງ ຫຼືໝົດມື້ ໃນການອະທິຖານກ່ຽວກັບການທ້າທາຍທີ່ທ່ານປະເຊີນຢູ່.

ພວກເຮົາທັງໝົດປະເຊີນກັບການທ້າທາຍຫຼາຍຢ່າງໃນແຕ່ລະອາທິດ. ຖ້າພວກເຮົາບໍ່ລະມັດລະວັງຢ່າງເຕັມທີ່, ພວກເຮົາຈະກາຍເປັນຄົນພະຍາຍາມແບກເອົາການທ້າທາຍທັງໝົດໄວ້ເທິງບ່າຂອງຕົວເອງ. ແຕ່ເປັນການດີທີ່ຈະເຕືອນວ່າພວກເຮົາມີພຣະເຈົ້າຜູ້ຢູ່ກັບເຮົາ ຜູ້ທີ່ຈະເຫັນເຮົາຜ່ານຜ່າບັນຫານັ້ນໄປ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**